# ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຍື່ນເອກະສານ ຄໍາຮ້ອງພິຈາລະນາການຂໍອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຈົດທະບຽນ ຮຸ້ນໃໝ່ເພີ່ມທຶນ



ໃນວັນທີ 17 ກໍລະກົດ 2025 **ທ່ານ ສາຍຈິດ ສິມມະວົງ** ຮອງຜູ້ອໍານວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ພ້ອມດ້ວຍ **ທ່ານ ປອ ສຸດທິເດດ ບຸນລືໄຊ** ຮອງຜູ້ອໍານວຍການບໍລິສັດຫຼັກຊັບ ລາວຈີນ ມະຫາຊົນ (ບລຈ) ໄດ້ເຂົ້າຍື່ນເອກະສານຄໍາຮ້ອງຄົບຊຸດ ໃຫ້ແກ່ **ທ່ານນາງ ແພງສີ ແພງເມືອງ**, ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເພື່ອຂໍສະເໜີທົບທວນຄວາມເປັນໄປໄດ້ໃນການພິຈາລະນາການອອກຈໍາໜ່າຍຮຸ້ນເພີ່ມທຶນຂອງ ທຄຕລ.

ການຍື່ນເອກະສານຄໍາຮ້ອງທົບທວນພິຈາລະນາການອອກຈໍາໜ່າຍຮຸ້ນເພີ່ມທຶນ ແມ່ນດໍາເນີນໄປຕາມຂັ້ນຕອນປົກກະຕິຂອງລະບຽບເພື່ອຂໍອະນຸຍາດ ອອກຈໍາໜ່າຍຮຸ້ນເພີ່ມທຶນ ເຊິ່ງ ທຄຕລ ໄດ້ມີແຜນການອອກຈໍາໜ່າຍຮຸ້ນເພີ່ມທຶນ ເພື່ອບັນລຸອັດຕາສ່ວນຄວາມພຽງພໍຂອງທຶນ ເພື່ອໃຫ້ໄດ້ຕາມມາດຕະຖານທີ່ທະນາຄານແຫ່ງ ສປປ ລາວ ວາງອອກ ເຊິ່ງຜ່ານໄດ້ມີການຮັບຮອງແລ້ວໃນກອງປະຊຸມຜູ້ຖືຮຸ້ນ ສະໄໝສາມັນ ປະຈໍາປີ 2024. ນອກຈາກນັ້ນ, ໃນວັນດຽວກັນ ທາງຄະນະເຮັດວຽກຈາກ ທຄຕລ ແລະ ບລຈ ກໍ່ໄດ້ເຂົ້າພົບຕະຫຼາດຫຼັກຊັບລາວ ເພື່ອຍື່ນຄໍາຮ້ອງຂໍທົບທວນເງື່ອນໄຂເບື້ອງຕົ້ນໃນການຈົດທະບຽນ.

ໃນການອອກຈໍາໜ່າຍຮຸ້ນສາມັນໃນຄັ້ງນີ້ ຮຸ້ນທັງໝົດຈະຖືກຈັດສັນ ແລະ ອອກຈໍາໜ່າຍໃຫ້ແກ່ມວນຊົນລວມທັງຜູ້ລົງທຶນພາຍໃນ ແລະ ຜູ້ລົງທຶນຕ່າງປະເທດ ທີ່ເປັນຜູ້ຖືຮຸ້ນເດີມ ແລະ ມວນຊົນທົ່ວໄປ ໂດຍບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ເປັນຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນ.

ພາຍຫຼັງສໍາເລັດຂັ້ນຕອນທົບທວນ ແລະ ປະກອບເອກະສານຄົບຊຸດ ຕາມລະບຽບການທີ່ກ່ຽວຂ້ອງແລ້ວ ທຄຕລ ຄາດວ່າຈະສາມາດເປີດໃຫ້ນັກລົງທຶນຜູ້ທີ່ສົນໃຈທັງພາຍໃນ ແລະ ຕ່າງປະເທດຈອງຊື້ຮຸ້ນໃໝ່ເພີ່ມທຶນ ພ້ອມກັບສໍາເລັດການຈົດທະບຽນໃນຕະຫຼາດຫຼັກຊັບລາວ ພາຍໃນໄຕມາດທີ 03 ຂອງປີ 2025 ນີ້.

